**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

------------====000====--------

ກະຊວງ ໂຍທາທິການ ແລະ ຂົນສົ່ງ

# <u>ແຈ້ງຂ່າວ</u>

**ວັນທີ 21 ຕຸລາ 2013, ເວລາ 9:00 ໂມງ**

ສັງລວມສະພາບແກ້ໄຂການເກີດອຸປະຕິເຫດເຮືອບິນ ATR72-600, ຂອງລັດວິສາຫະກິດການບິນລາວ, ຖ້ຽວບິນ QV 301 ທີ່ຕົກລົງແມ່ນ້ຳຂອງ ຢູ່ເມືອງປາກເຊ

ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດແຈ້ງຂ່າວ ສັງລວມສະພາບການແກ້ໄຂອຸປະຕິເຫດເຮືອບິນ ATR72-600, ຂອງລັດວິສາຫະກິດການບິນລາວ, ຖ້ຽວບິນ QV 301 ທີ່ຕົກລົງແມ່ນ້ຳຂອງ ຢູ່ເມືອງປາກເຊ ໃນວັນທີ 16 ຕຸລາ 2013 ຜ່ານມາ, ມາເຖິງຕອນເຊົ້າມື້ນີ້, ວັນທີ 21 ຕຸລາ 2013, ມີດັ່ງນີ້:

## I. ສະພາບລວມຂອງເຫດການ:

ໃນເວລາ 15:55 ໂມງ ຂອງວັນທີ 16/10/2013 ເຮືອບິນຂອງລັດວິສາຫະກິດການບິນລາວ ທີ່ບິນຂຶ້ນຈາກນະຄອນຫຼວງວຽງຈັນ ໄດ້ບິນມາເຖິງປາກເຊ ແລະ ກຳລັງຈະລົງເດີ່ນ, ທັນໃດນັ້ນໄດ້ເກີດສະພາບອາກາດປ່ຽນແປງ, ຟ້າມືດ ແລະ ມີຝົນຕົກກະທັນຫັນ, ໄລຍະການແນມເຫັນຂອງຫໍຄອຍສະໜາມ ສາມາດເຫັນໄຟເບື້ອງລານບິນ ຢູ່ສົ້ນເດີ່ນ, ພະນັກງານຢູ່ຫໍຄອຍສັງເກດເຫັນເຮືອບິນ ບິນມາບໍ່ສື່ກັບທາງຂຶ້ນ-ລົງ, ຈຶ່ງບອກໃຫ້ນັກບິນບິນຂຶ້ນ ແລະ ລ້ຽວໄປ ຂ້າງຂວາ, ຫຼັງຈາກນັ້ນປະມານ 5ນາທີ ກໍ່ມີອ້າຍນ້ອງທະຫານໂທລະສັບມາບອກວ່າ ມີເຮືອບິນຕົກຢູ່ໃກ້ກັບດອນຜາມາງ.

ພາຍຫຼັງໄດ້ຮັບແຈ້ງເຫດ, ເຈົ້າໜ້າທີ່ກ່ຽວຂ້ອງ ໄດ້ຮີບອອກໄປຫາສະຖານທີ່ເກີດເຫດທັນທີ ແລະໄດ້ພົບເຫັນສິ້ນສ່ວນເຮືອບິນຈຳນວນໜຶ່ງ ແລະ ຊາກສົບຈຳນວນ 4 ສົບ ຢູ່ບໍລິເວນທາງດອນຜາລີ. ຈາກການສອບຖາມປະຊາຊົນທີ່ອ້າງວ່າເຫັນເຫດການໃຫ້ຮູ້ວ່າ: ໃນເວລາທີ່ເຮືອບິນໂຄ້ງຂ້າມຂ້ຳຂອງມານັ້ນ ແມ່ນບິນໃນລະດັບຕ່ຳຫລາຍ, ຈາກນັ້ນ ຈຶ່ງຕົກໃສ່ທາງດອນ ແລ້ວກະເດັນຂຶ້ນ ແລະ ເກີດລະເບີດຢ່າງຮຸນແຮງ ແລ້ວຈຶ່ງຕົກນ້ຳຂອງ.

ຈຳນວນຜູ້ໂດຍສານ ແລະຈຸບິນມີທັງໝົດ 49 ຄົນ, ໃນນັ້ນ ເປັນຜູ້ໂດຍສານ 44 ຄົນ, ນັກບິນ 2 ຄົນ, ນາຍຊ່າງ 1 ຄົນ ແລະ ນາງສາວອາກາດ 2 ຄົນ, ແຍກສັນຊາດເປັນຄົນລາວ 17, ຝຼັ່ງ 7, ອົດສະຕາລີ 5, ໄທ 5, ເກົາຫຼີໃຕ້ 3, ຫວຽດນາມ 2, ອາເມລິກາ 1, ຈີນ 2, ການາດາ 1, ມາເລເຊຍ 1, ກຳປູເຈຍ 1 ແລະ ຫວຽດນາມ 2.

## II. ການຊອກຄົ້ນ, ກອບກູ້ ແລະ ສົນລະສູດລັກສະນະບຸກຄົນ ຂອງຜູ້ເຄາະຮ້າຍ:

ພາຍຫຼັງທີ່ພາກສ່ວນຕ່າງໆກ່ຽວຂ້ອງ ໄດ້ຮັບແຈ້ງເຫດເຮືອບິນຕົກໃນຄັ້ງນີ້ແລ້ວ, ກໍ່ໄດ້ດຳເນີນການແກ້ໄຂບັນຫາຢ່າງເລັ່ງດ່ວນເຊັ່ນ: ໄດ້ປະສານກັບລັດວິສາຫະກິດໄຟຟ້າລາວ ໃຫ້ສິ່ງນັກມຸດນ້ຳມາສະຖານທີ່ເກີດເຫດດ ດຳເນີນການຊອກຄົ້ນຫາຜູ້ລອດຊີວິດ ແຕ່ບໍ່ພົບເຫັນ, ຊຶ່ງຄາດວ່າຈະເສຍຊີວິດທັງໝົດ, ຕໍ່ມາໄດ້ພົບສົບ 4 ສົບ ແລະ ໄດ້ທຳການເກັບກູ້ຊາກສົບທີ່ພົບເຫັນມາໄວ້ທີ່ວັດຈີນ, ພ້ອມທັງເຮັດບົດບັນທຶກການຄົ້ນພົບສິ່ງຂອງ, ເຄື່ອງມີຄ່າ ແລະ ອື່ນໆ. ພ້ອມນັ້ນ, ໄດ້ຈັດກອງປະຊຸມຂຶ້ນຢ່າງຮີບດ່ວນ ໃນເວລາ 07:30 ໂມງ ໃນວັນທີ 17/10/2013 ແລະກຳນົດແຜນການ, ບາງມາດຕະການໃນການດຳເນີນການແກ້ໄຂ ດັ່ງນີ້:

1. ໄດ້ຈັດຕັ້ງສູນບັນຊາການຂຶ້ນ ແລະ ປະຈຳການ ຢູ່ໂຮງແຮມຈຳປາສັກແກຣນ, ໂດຍມີທ່ານ ລັດຖະມົນຕີວ່າການ ກະຊວງ ຍທຂ (ທ່ານ ສົມມາດ ພົລເສນາ) ແລະ ທ່ານຮອງເຈົ້າແຂວງ ແຂວງຈຳປາສັກ (ທ່ານ ດຣ. ບຸນຖອງ ດີວິໄຊ) ເປັນຜູ້ປະຈຳການຊີ້ນຳ ແລະ ແກ້ໄຂບັນຫາ.

2. ແຕ່ງຕັ້ງຄະນະຊີ້ນຳລວມ ແລະ ອະນຸກຳມະການຕ່າງໆຄື: ອະນຸກຳມະການຊອກຄົ້ນ-ເກັບກູ້ຊາກສົບ, ອະນຸກຳມະການເກັບມ້ຽນຊາກສົບ, ອະນຸກຳມະການສັນລະສູດຊາກສົບ ແລະ ອະນຸກຳມະການເກັບກຳຂໍ້ມູນ ແລະ ຖະແຫຼງຂ່າວ (ຂໍ້ຕົກລົງຂອງເຈົ້າແຂວງ ແຂວງຈຳປາສັກ, ສະບັບເລກທີ 1579/ຈຂ.ສຂ, ລົງວັນທີ 18/10/2013).
3. ໄດ້ຮັບຂໍ້ຕົກລົງຂອງ ນາຍົກລັດຖະມົນຕີ ແຕ່ງຕັ້ງຄະນະສະເພາະກິດສືບສວນ-ສອບສວນ (ຂໍ້ຕົກລົງ ນາຍົກ ລັດຖະມົນຕີ, ສະບັບເລກທີ 103/ນຍ, ລົງວັນທີ 17/10/2013).
4. ແຕ່ງຕັ້ງຄະນະຮັບຜິດຊອບຈັດງານປະນະກິດສົບ ຜູ້ທີ່ເສຍຊີວິດຍ້ອນອຸປະຕິເຫດດັ່ງກ່າວ (ຂໍ້ຕົກລົງ ລັດຖະມົນ ຕີວ່າການກະຊວງ ຍທນ, ສະບັບເລກທີ 14995/ຍທຂ, ລົງວັນທີ 18/10/2013).
5. ແຕ່ງຕັ້ງຫົວໜ້າກົມການບິນພົນລະເຮືອນ ກະຊວງ ຍທຂ ເປັນຜູ້ໃຫ້ສຳພາດຂ່າວສື່ມວນຊົນ ກ່ຽວກັບເຫດການທີ່ເກີດຂຶ້ນຢ່າງເປັນທາງການ.
6. ແຕ່ງຕັ້ງໜ່ວຍງານຮັບເອົາສົບທີ່ຄົ້ນພົບ, ໜ່ວຍງານຊາປະນະກິດສົບ ແລະ ໜ່ວຍງານປະຕິບັດນະໂຍບາຍ ແລະ ມອບສິ່ງສົບຜູ້ເຄາະຮ້າຍໃຫ້ຄອບຄົວ ແລະ ຍາດພີ່ນ້ອງ.
7. ມອບຄວາມຮັບຜິດຊອບໃນການໃຊ້ຈ່າຍໃນການດຳເນີນງານຕ່າງໆ ໃຫ້ລັດວິສາຫະກິດການບິນລາວ.
8. ປະສານກັບເຈົ້າໜ້າທີ່ຕຳຫຼວດຈັດຕັ້ງເວນຍາມ, ປ້ອງກັນ ເພື່ອບໍ່ໃຫ້ປະຊາຊົນ ແລະ ພາກສ່ວນກ່ຽວຂ້ອງເຂົ້າໄປໃນສະຖານທີເກີດເຫດ.
9. ຈັດຫາພາຫະນະຮັບໃຊ້, ລົດ Ambulance ຈາກໂຮງໝໍແຂວງຈຳປາສັກ, ຕຶກສາກົນ, ໂຮງໝໍ 106 ແລະ ໂຮງໝໍກອງພົນທີ 5 ລວມຈຳນວນ 4 ຄັນ, ເຮືອໄວຈາກກອງພົນທີ 5 ຈຳນວນ 4 ລຳ ແລະ ກອງບັນຊາການ ປກສ ແຂວງຈຳປາສັກ 1 ລຳ (ລວມ 5 ລຳ).
10. ໄດ້ປະສານກັບປະເທດໄທ ເພື່ອຂໍຄວາມຊ່ວຍເຫຼືອໃນການເກັບຊອກຄົ້ນ ແລະ ຊາກເຄື່ອງບິນ.

## III. ການດຳເນີນ ການຊອກຄົ້ນ ແລະ ເກັບກູ້ຊາກສົບເຄາະຮ້າຍ.

ຈຳນວນຄົນພາກສ່ວນຕ່າງໆ ທີ່ເຂົ້າຮ່ວມໃນການຊອກຄົ້ນປະກອບດ້ວຍ ນັກມຸດນ້ຳຈາກບໍລິສັດໄຟຟ້າລາວ, ກຳລັງທະຫານກອງພົນທີ 5, ທະຫານເມືອງໂພນທອງ, ປກສ ແຂວງ, ແພດ-ໝໍຈາກໂຮງໝໍແຂວງ, ໂຮງໝໍ 106 ແລະ ໂຮງໝໍກອງພົນທີ 5. ພ້ອມນັ້ນ, ຍັງມີພາກສ່ວນເອກະຊົນຂອງແຂວງ, ກາລັງເຈົ້າໜ້າທີ່ ແລະ ອາສາສະໝັກຈາກປະເທດໄທ (ທະຫານເຮືອ, ມູນນິທິຂີງຈື້ ແລະ ມູນນິທິຮຸກ31) ລວມທັງໝົດປະມານ 200 ກ່ວາຄົນ.

- ຜ່ານການດຳເນີນການຊອກຄົ້ນ ແລະ ເກັບກູ້ຊາກສົບ:
  - ວັນທີ 16/10/2013 ພົບເຫັນ ແລະ ເກັບກູ້ໄດ້ 4 ສົບ.
  - ວັນທີ 17/10/2013 ພົບເຫັນ ແລະ ເກັບກູ້ໄດ້ 5 ສົບ, ລວມ 9 ສົບ,
  - ວັນທີ 18/10/2013 ພົບເຫັນ ແລະ ເກັບກູ້ໄດ້ 21 ສົບ ແລະ 5 ສິ້ນສ່ວນ, ລວມ 30 ສົບ ແລະ 5 ສິ້ນສ່ວນ ( ຂາຂວາ )
  - ວັນທີ 19/10/2013 ພົບເຫັນ ແລະ ເກັບກູ້ໄດ້ 6 ສົບ ແລະ 4 ສິ້ນສ່ວນ, ລວມ 36 ສົບ ແລະ 9 ສິ້ນສ່ວນ; ໃນນັ້ນມີຍິງ 11 ສົບ, ຊາຍ 21 ສົບ ແລະ ເດັກນ້ອຍ ( ຊາຍ ) 2ສົບ, ບໍ່ຮູ້ເພດ.
  - ວັນທີ 20/10/2013 ພົບເຫັນ ແລະ ເກັບກູ້ໄດ້ລວມທັງໝົດ 42 ສົບ ແລະ 12 ສິ້ນສ່ວນຮ່າງກາຍ.
- ການສັນລະສູດລັກສະນະບຸກຄົນ ແລະ ການມອບສິ່ງສົບໃຫ້ຍາດພີ່ນ້ອງ:

ສົບທັງໝົດທີ່ເກັບກູ້ໄດ້ ແມ່ນໄດ້ນຳມາເກັບຮັກສາໄວ້ທີ່ວັດຈີນປາກເຊ, ສຳລັບສົບທີ່ເກັບກູ້ໄດ້ໃນວັນທຳອິດຮອດວັນທີສາມ (ວັນທີ 16-18/10/2013), ເຈົ້າໜ້າທີ່ ແຂວງຈຳປາສັກ ແລະ ສາທາລະນະສຸກແຂວງ ໄດ້ທຳການພິສູດລັກສະນະບຸກຄົນພາຍນອກ ແລະ ຫຼັກຖານຕິດໂຕ, ພ້ອມທັງການຢັ້ງຢືນຂອງຍາດພີ່ນ້ອງໄດ້ທັງໝົດ 15 ສົບ, ໃນນັ້ນ ເປັນສົບຂອງຄົນລາວຈຳນວນ 9 ສົບ ແລະ ຄົນຕ່າງປະເທດ 6 ສົບ ໃນນັ້ນມີຊາວການາດາ1, ກຳປູເຈຍ1, ຫວຽດນາມ1, ຈີນ1, ອາເມລິກາ1 ແລະ ມາເລເຊຍ 1. ພ້ອມນັ້ນ, ໄດ້ສົ່ງມອບໃຫ້ພີ່ນ້ອງ ນາໄປທຳພິທີທາງສາດສະໜາ ແລະ ຊາປະນາກິດສົບຈຳນວນ 12 ສົບ (ເປັນພົນລະເມືອງລາວ 9ສົບ ແລະ ຊາວຕ່າງປະເທດ 3 ສົບ). ນອກນັ້ນ 24 ສົບ ແລະ 9ສິ້ນສ່ວນ ແມ່ນຍັງເກັບຮັກສາໄວ້ຢູ່ວັດຈີນ(ສະຖານທີ່ເກັບສົບ).

ໃນວັນທີ 18/10/2013 ໄດ້ມີເຈົ້າໜ້າທີ່ ແລະ ຜູ້ຊ່ຽວຊານສັນລະສູດລັກສະນະບຸກຄົນຂອງສົບ ຈາກຣາຊາອານາຈັກໄທ, ອົດສະຕາລີ ແລະ ເກົາຫຼີ ໄດ້ເຂົ້າມາຮ່ວມ ເພື່ອທຳການສັນລະສູດສົບ, ເຊິ່ງໄດ້ເລີ່ມທຳການສັນລະສູດ ດ້ວຍການເກັບຂໍ້ມູນພາຍນອກ, ພິມລາຍມື, ຮອຍຕີນ, ຖ່າຍພາບພັກແຂ້ວ, ເກັບຕົວຢ່າງສົບເພື່ອກວດ DNA, ບັນທຶກຂໍ້ມູນລະອຽດ ເຂົ້າໃນແບບຟອມສັນລະສູດຫຼັກ

ຖານ ຕາມຫຼັກການ, ຂັ້ນຕອນ ແລະມາດຖານສາກົນ. ຜົນການບັນທຶກຂໍ້ມູນ ແລ້ ສັນລະສູດ ເບື້ອງຕົ້ນ ໃນວັນທີ 19/10/2013 ໄດ້ຈຳນວນ 11 ສົບ ແລະ 5 ສິ້ນສ່ວນ.

- **ການຊາປານະກິດສົບ ແລະ ການປະຕິບັດນະໂຍບາຍເບື້ອງຕົ້ນ:**

ຄະນະຮັບຜິດຊອບຈັດງານຊາປານະກິດສົບ ແລະບໍລິສັດການບິນລາວ ໄດ້ໄປຢ້ຽມຢາມໃຫ້ຄວາມອົບອຸ່ນຄອບຄົວຜູ້ຖືກເຄາະຮ້າຍ, ວາງພວງມະລາ ແລະ ມອບເງິນຊ່ວຍເຫຼືອຄອບຄົວຜູ້ເສຍຊີວິດ (ເບື້ອງຕົ້ນ ໃນການທຳສົບຄອບຄົວລະ 20 ລ້ານກີບ. ປະຈຸບັນ, ໄດ້ມອບໃຫ້ແລ້ວ 8 ຄອບຄົວ ລວມເປັນເງິນ 160 ລ້ານກີບ, ສຳລັບຍາດພີ່ນ້ອງຢູ່ແຫ່ງອື່ນ ກໍ່ໄດ້ຈັດສົ່ງກັບບ້ານຕາມຈຸດປະສົງຂອງຄອບຄົວ ແລະ ຍາດພີ່ນ້ອງ ເປັນຕົ້ນ: ສົ່ງເມືອນະຄອນຫຼວງວຽງຈັນ 3 ສົບດ ແຂວງຄຳມ່ວນ 1 ສົບ, ແຂວງອັດຕະປື 1 ສົບດ ພະນົມເປັນ (ກຳປູເຈຍ) 1 ສົບ ແລະ ຈັດຊາປານະກິດສົບທີ່ເມືອງປາກເຊ 6 ສົບ. ນອກຈາກນັ້ນ, ບໍລິສັດປະກັນໄພກໍ່ໄດ້ພົບປະກັນບັນດາຍາດພີ່ນ້ອງຂອງຜູ້ເຄາະຮ້າຍ ແລະ ສະເໜີມອບເງິນຊ່ວຍເຫຼືອກ່ອນລ່ວງໜ້າໃຫ້ຄອບຄົວລະ 5.000 ໂດລາສະຫະດລັດ.

ຄະນະຮັບຜິດຊອບໄດ້ຕ້ອນຮັບ ແລະອຳນວຍຄວາມສະດວກໃຫ້ຄອບຄົວດ ຍາດພີ່ນ້ອງຜູ້ຖືກເຄາະຮ້າຍ ທີ່ເດີນທາງມາຮັບສົບ ດ້ວຍການຈັດສະຖານທີ່ກິນຢູ່-ພັກເຊົາໃຫ້, ພ້ອມທັງອະທິບາຍຊີ້ແຈງ, ລາຍງານຄວາມຄືບໜ້າໃນການຊອກຄົ້ນ ແລະ ເກັບກູ້ໃຫ້ເຂົາເຈົ້າໄດ້ຮັບຮູ້ ແລະ ອຳນວຍຄວາມສະດວກ ໃນການເຂົ້າກວດເບິ່ງສົບທີ່ເກັບກູ້ໄດ້. ພ້ອມກັນນັ້ນ, ທ່ານ ລັດຖະມົນຕີວ່າການກະຊວງ ຍທຂ ຍັງໄດ້ມີການພົບປະເຈົ້າໜ້າທີ່ຈາກສະຖານທູດ, ຍາດພີ່ນ້ອງ ຜູ້ຖືກເຄາະຮ້າຍ ເພື່ອສະແດງຄວາມເສົ້າສະລົດໃຈ, ແຈ້ງຜົນການປະຕິບັດງານ ແລະ ຕອບບັນຫາຂໍ້ຂ້ອງ ໃຈຕ່າງໆຂອງຍາດພີ່ນ້ອງ, ເຊິ່ງພົບປະກັບສະຖານທູດຈີນ ແລະ ພີ່ນ້ອງຊາວຈີນ ແລະ ເກົາຫຼີໃຕ້.

## IV. ການເກັບກຳຂໍ້ມູນ ແລະ ຖະແຫລງຂ່າວ.

ໄດ້ຈັດຕັ້ງການເກັບກຳຂໍ້ມູນຄວາມຄືບໜ້າຂອງການປະຕິບັດງານ, ການຊອກຄົ້ນ-ເກັບກູ້ຊາກສົບ ແລະຊາກເຮືອບິນຢ່າງຕໍ່ເນື່ອງ, ໂດຍຈັດຕັ້ງກອງເລຂາ ເຮັດໜ້າທີ່ປະສານງານ ແລະ ສະໜອງຂໍ້ມູນແກ່ການນຳ ແລະ ແຈ້ງຂ່າວ, ເຊິ່ງໄດ້ຈັດຕັ້ງການຖະແຫລງຂ່າວຕໍ່ສື່ມວນຊົນທັງພາຍໃນ ແລະ ຕ່າງປະເທດຢ່າງເປັນທາງການ 2 ຄັ້ງ ໃນວັນທີ 18/10/2013, ເວລາ 18:00 ໂມງ ແລະ ວັນທີ 19/10/2013 ເວລາ 16:00 ໂມງ ແລະ ຈະສືບຕໍ່ແຈ້ງຂ່າວໃຫ້ສື່ ແລະ ຍາດພີ່ນ້ອງເປັນປົກກະຕິ ໃນເວລາ 10:00 ໂມງ ຂອງທຸກວັນໃນໄລຍະປະຕິບັດການສະເພາະກິດ. ພ້ອມກັນນັ້ນ, ຈະໄດ້ຈັດຕັ້ງພິທີໄຫວ້ອາໄລໃຫຍ່ ໃນວັນທີ 21/10/2013 ເວລາ 14:00 ໂມງ ຕາມການແຈ້ງການຂອງ ຫ້ອງວ່າການລັດຖະບານ.

## V. ການເກັບກຳຂໍ້ມູນສືບສວນ-ສອບສວນ.

ໃນການສືບສວນ-ສອບສວນຫາສາຍເຫດຂອງ ອຸປະຕິເຫດເບື້ອງຕົ້ນ ໄດ້ແບ່ງອອກເປັນ3 ຈຸງານຄື:(1) ຈຸຊອກຫາເຮືອບິນ, (2) ຈຸຊອກຫາກ່ອງດຳ ແລະ (3) ຈຸເກັບກຳຂໍ້ມູນສະພາບດິນຟ້າອາກາດໃນມື້ເກີດເຫດ; ໂດຍໃນແຕ່ລະຈຸປະກອບມີ ຜູ້ຊ່ຽວຊານຈາກບໍລິສັດແອບັດ ປະເທດຝຼັ່ງ ແລະ ກອງທັບອາກາດໄທ ຮ່ວມນຳ. ປະຈຸບັນ, ກຳລັງຂຸ້ນຂ້ຽວດຳເນີນການ , ສ່ວນການລາຍງານລະອຽດກ່ຽວກັບຜົນການເກັບກຳຂໍ້ມູນ, ສືບສວນ-ສອບສວນເບື້ອງ ແມ່ນມີບົດລາຍງານສະເພາະຄັດຕິດມາພ້ອມ. ສຳລັບເຮືອບິນລຳດັ່ງກ່າວ ແມ່ນເປັນເອບິນ ATR72-600 ລຳໃໝ່ຫລ້າສຸດທີ່ມາຮອດ ສປປ ລາວ ໃນວັນທີ 28/3/2013 ທີ່ຜ່ານມາ.

ສຳລັບຜົນການຊອກຫາເຮືອບິນ ແລະກ່ອງດຳ, ມາຮອດແລງວັນທີ 19/10/2013 ສາມາດ ກວດພົບສັນຍານ ແລະ ຈຸດພິກັດຂອງກ່ອງດຳແລ້ວ, ແຕ່ການມຸດນ້ຳລົງຫາຕົວຈິງບໍ່ທັນພົບເຫັນ ແລະກຳລັງສຸມໃສ່ ເພື່ອຊອກຫາຢ່າງເຕັມທີ.

ອີກເທື່ອໜຶ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍສະແດງຄວາມເສຍໃຈ ຕໍ່ເຫດການອັນບໍ່ເພິ່ງປາດຖະໜາ ແລະ ຂໍສະແດງຄວາມເສົ້າສະລົດໃຈຢ່າງສຸດຊຶ້ງ ແລະ ເຫັນອົກເຫັນໃຈ ມາຍັງຄອບຄົວຍາດພີ່ນ້ອງຂອງຜູ້ປະສົບເຄາະຮ້າຍ ຕໍ່ການສູນເສຍອັນໃຫ່ຍຫຼວງໃນຄັ້ງນີ້ດ້ວຍ.

**ກະຊວງ ໂຍທາທິການ ແລະ ຂົນສົ່ງ.**